ສົ່ງ: ທ່ານ ຫົວໜ້າສໍານັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 03 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 FEB 2016

ສໍານັກງານ ຄຄຊ
ເລກທີ 0143
ວັນທີ 17 FEB 2016
ໂທລະສັບ 021 217770

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈໍາເດືອນ 01/2016 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານພົ້ນເດັ່ນ

1. ປະທານ ຄຄຊ ໄດ້ຮັບຮອງເອົາລະບຽບວ່າດ້ວຍການສະໜອງຂໍ້ມູນ ກ່ຽວກັບແຫຼ່ງທຶນຈົດທະບຽນ, ໂຄງສ້າງຜູ້ຖືຮຸ້ນ ແລະ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງຂອງບໍລິສັດຫຼັກຊັບ ແລະ ຂໍ້ຕົກລົງວ່າດ້ວຍການຍົກເວັ້ນການປະຕິບັດລະບຽບທີ່ຕິດພັນກັບການບັນຊີ ແລະ ການກວດສອບວຽກງານຫຼັກຊັບ;
2. ສໍາເລັດການເຊັນຮັບຮອງຂໍ້ຕົກລົງວ່າດ້ວຍການສ້າງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ;
3. ສໍາເລັດການນໍາສົ່ງຮ່າງດໍາລັດວ່າດ້ວຍໂຮງຊວດຈໍາ ໃຫ້ຫ້ອງວ່າການລັດຖະບານ ເພື່ອກຽມຜ່ານກອງປະຊຸມລັດຖະບານ;
4. ໄດ້ຮັບເງິນປອມ ແລະ ອອກໃບຢັ້ງຢືນເງິນປອມໃຫ້ ທະນາຄານ MB, BCEL ມີປະເພດໃບ 50.000 ກີບ ຈໍານວນ 3 ໃບ ລວມເປັນເງິນ 150.000 ກີບ;
5. ສໍາເລັດພິທີເຊັນສັນຍາ MOU ກັບ IFC ກ່ຽວກັບການຊ່ວຍເຫຼືອໃນການພັດທະນາລະບົບຂໍ້ມູນຂ່າວສານສິນເຊື່ອຂອງ ທຫລ, ພິທີເຊັນສັນຍາ MOU ກັບ ໜ່ວຍງານຂ່າວກອງທາງດ້ານການເງິນ ສ. ເກົາຫຼີ ແລະ ການແລກປ່ຽນບົດຮຽນ ກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT);

6. ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: ❶. ສຳເລັດການຮັບຮອງຂໍ້ຕົກລົງວ່າດ້ວຍ ການຊອກຮູ້ລູກຄ້າ ແລະ ການເພີ່ມທະວີເອົາໃຈໃສ່ຊອກຮູ້ລູກຄ້າ; ❷. ຮັບຮອງຄຳແນະນຳວ່າດ້ວຍການລາຍງານທຸລະກຳ ທີ່ສົງໄສວ່າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ❸. ຮັບຮອງຄຳແນະນຳວ່າດ້ວຍຕົວຊີ້ບອກຂອງທຸລະກຳທີ່ສົງໄສວ່າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹. ສຳເລັດກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (NCC) ຄັ້ງທີ IV, ❺. ກອງປະຊຸມສຳມະນາ ກະກຽມວຽກງານຈັດກອງປະຊຸມເປັນເຈົ້າພາບຈັດກອງປະຊຸມການເງິນ-ທະນາຄານອາຊຽນ ແລະ ອາຊຽນ+3 ເຊັ່ນ: ວຽກງານພິທີການ ແລະ ພະນັກງານຕິດຕາມ, ວຽກງານເນື້ອໃນ ແລະ ການສ້າງເວບໄຊ. ໃນເດືອນ 1/2016 ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈຳນວນ 18 ສະບັບ. ປັດຈຸບັນ STR ລວມທັງໝົດ 277 ສະບັບ;

7. ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຖາວອນ ໃຫ້ແກ່ທະນາຄານ ໄຊງ່ອນ-ຮ່າໂນ້ຍ ລາວ ຈຳກັດ ສາຂາຈຳປາສັກ, ມອບໃບອະນຸຍາດດຳເນີນທຸລະກິດຖາວອນ ໃຫ້ແກ່ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ນິວຄອນເຊັບ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ມະນີ;

8. ສຳເລັດການຂຶ້ນແຜນລົງກວດກາສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ບໍລິສັດເຊົ່າສິນເຊື່ອ, ໂຮງຊວດຈຳ ແລະ ບໍລິສັດ ໂອນເງິນດ່ວນ ປະຈຳປີ 2015;

9. ສຳເລັດການອອກແຈ້ງການເຖິງທະນາຄານທຸລະກິດ ກ່ຽວກັບການສົ່ງແຜນການເຄື່ອນໄຫວ ການດຳເນີນທຸລະກິດ ປະຈຳປີ 2016;

10. ສຳເລັດການສະຫຼຸບລາຍຮັບ-ລາຍຈ່າຍ ປະຈຳປີ 2015 ແລະ ຂຶ້ນແຜນລາຍຮັບ-ລາຍຈ່າຍ ປະຈຳປີ 2016.

## III. <u>ວຽກງານວິຊາສະເພາະ</u>

### 1. <u>ສະພາບເສດຖະກິດເງິນຕາສາກົນ</u>

ເສດຖະກິດໂລກຍັງປະເຊີນກັບບັນຫາ ແລະ ສິ່ງທ້າທາຍຫຼາຍດ້ານ ໂດຍສະເພາະແມ່ນຄວາມຜັນຜວນຂອງຕະຫຼາດການເງິນໂລກ ແລະ ບັນຫາເສດຖະກິດຂະຫຍາຍຕົວຊ້າລົງ ຢູ່ບັນດາປະເທດເສດຖະກິດເກີດໃໝ່ ໂດຍສະເພາະເສດຖະກິດຂອງ ສປ. ຈີນ ຊຶ່ງໄດ້ສົ່ງຜົນກະທົບຕໍ່ພາກອຸດສາຫະກຳການຜະລິດ ແລະ ພາກການສົ່ງອອກຂອງຫຼາຍປະເທດໃນທົ່ວໂລກ ເຮັດໃຫ້ເສດຖະກິດໂລກຂະຫຍາຍຕົວຢູ່ໃນລະດັບ 3,1% ຈາກທີ່ຄາດຄະເນໄວ້ທີ່ 3,3%. ສ່ວນເສດຖະກິດຂອງປະເທດ ສ. ອາເມລິກາ ເຫັນວ່າຍັງສືບຕໍ່ຂະຫຍາຍຕົວດີຂຶ້ນ ເຫັນໄດ້ຈາກສະພາບຕະຫຼາດການຈ້າງງານ ພາຍໃນປະເທດ ທີ່ສືບຕໍ່ຂະຫຍາຍຕົວ, ດັດຊະນີການຊົມໃຊ້ພາກຄົວເຮືອນ ແລະ ການລົງທຶນໃນຊັບສິນຄົງທີ່ ເພີ່ມຂຶ້ນຢ່າງແຂງແຮງ ໃນຊ່ວງ 2 ໄຕມາດທ້າຍປີ 2015 ເຮັດໃຫ້ທະນາຄານກາງ ສ. ອາເມລິກາ ປະກາດປັບຂຶ້ນອັດຕາດອກເບ້ຍພື້ນຖານ ສູ່ລະດັບ 0,5% ຈາກ 0,25% ເຊິ່ງເປັນການປັບຂຶ້ນຄັ້ງທຳອິດ ໃນຮອບ 9 ປີ;

ສະພາບອັດຕາແລກປ່ຽນສາກົນ ເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າ 1,39% ເມື່ອທຽບໃສ່ເງິນເອີໂຣ ແລະ ອ່ອນຄ່າ 2,22% ເມື່ອທຽບໃສ່ເງິນເຢນ ຍ້ອນຕົວເລກເສດຖະກິດຂອງ ສ. ອາເມລິກາ ອອກມາດີ. ສ່ວນຫຼາຍສະກຸນເງິນໃນພາກພື້ນອາຊີ ເຫັນວ່າອ່ອນຄ່າເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນດັດຊະນີການຜະລິດຂອງ ສປ. ຈີນ ຫຼຸດລົງເປັນ 49,4 ໃນເດືອນ 12/2015 ຈາກ 50,5 ໃນເດືອນຜ່ານມາ ແລະ ທະນາຄານກາງ ສປ. ຈີນ ປັບຫຼຸດຄ່າເງິນຢວນລົງ 0,1% ໃນວັນທີ 11/12/2015 ເປັນ 6,4140 ຢວນ/ໂດລາສະຫະລັດ ຊຶ່ງເປັນລະດັບຕ່ຳສຸດໃນຮອບ 4 ປີ ເພື່ອເປັນການກະຕຸ້ນການສົ່ງອອກ;

ລາຄານ້ຳມັນໃນຕະຫຼາດໂລກ ຫຼຸດລົງ 12,25% ມາເປັນ 36,86 ໂດລາ/ບາເຣວ ຍ້ອນການຜະລິດນ້ຳມັນດິບຂອງກຸ່ມ OPEC ເພີ່ມຂຶ້ນ 0,23 ລ້ານບາເຣວ ມາເປັນ 31,7 ລ້ານບາເຣວ/ວັນ ໃນເດືອນ 11/2015 ຊຶ່ງສູງກວ່າຄວາມຕ້ອງການນ້ຳມັນໃນຕະຫຼາດໂລກ 0,86 ລ້ານບາເຣວ/ວັນ ບວກກັບການຍົກເລີກກົດໝາຍຫ້າມການສົ່ງອອກນ້ຳມັນດິບຂອງ ສ. ອາເມລິກາ ທີ່ມີມາຫຼາຍກວ່າ 40 ປີ. ສ່ວນລາຄາຄຳໃນຕະຫຼາດສາກົນ ເພີ່ມຂຶ້ນ 0,23% ເປັນ 1.076,25 ໂດລາສະຫະລັດ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ ຈາກຄວາມຜັນຜວນຂອງເສດຖະກິດ ແລະ ກອງທຶນ SPDR (ກອງທຶນຄຳທີ່ໃຫຍ່ທີ່ສຸດໃນໂລກ) ເຂົ້າຊື້ຄຳສຸດທິ 18,74 ໂຕນ ໃນວັນທີ 18/12/2015 ເປັນ 645,94 ໂຕນ ບວກກັບການອ່ອນຄ່າຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

## 2. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

ທະນາຄານແຫ່ງ ສປປ ລາວ ໄດ້ສືບຕໍ່ປະຕິບັດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາ ໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດດັ່ງລຸ່ມນີ້:

- ອັດຕາເງິນເຟີ້ປະຈຳເດືອນ 01/2015 (ຕົວເລກຄາດຄະເນ) ຢູ່ໃນລະດັບ 0,84% ຫຼຸດລົງ 0,06% ຈາກ 0,90% ໃນເດືອນ 12/2015;
- ຖານເງິນຕາປະຈຳເດືອນ 01/2016 ຫຼຸດລົງ 773,24 ຕື້ກີບ ຫຼື 2,34% ທຽບໃສ່ເດືອນ 12/2015 ສາເຫດຍ້ອນທະນາຄານທຸລະກິດຖອນເງິນຝາກອອກນຳໃຊ້ 116,63 ລ້ານໂດລາສະຫະລັດ ແລະ ໂອນເງິນໄປຕ່າງປະເທດສຸດທິ 91,83 ລ້ານໂດລາສະຫະລັດ, ລັດຖະບານຊຳລະເງິນລ່ວງໜ້າ ແລະ ພັນທະບັດໃຫ້ ທຫລ 1.455 ຕື້ກີບ, ເຖິງແມ່ນວ່າລັດຖະບານຮັບເງິນຂາຍພັນທະບັດ 178 ລ້ານໂດລາສະຫະລັດ ແລະ ໃຊ້ຈ່າຍງົບປະມານ 576 ຕື້ກີບ, ທະນາຄານແຫ່ງ ສປປ ລາວ ປ່ອຍສິນເຊື່ອໃຫ້ທະນາຄານທຸລະກິດ 30 ລ້ານໂດລາສະຫະລັດ. ປະລິມານເງິນ $M_2$ ເພີ່ມຂຶ້ນ 340,58 ຕື້ກີບ ຫຼື 0,55% ເມື່ອທຽບໃສ່ເດືອນ 12/2015 ແລະ ເພີ່ມຂຶ້ນ 7.410,19 ຕື້ກີບ ຫຼື 13,50% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 01/2016 ເຫັນວ່າເງິນກີບແຂງຄ່າ 0,08% ທຽບໃສ່ເງິນໂດລາສະຫະລັດ ແລະ ແຂງຄ່າ 0,77% ທຽບໃສ່ເງິນບາດ. ສ່ວນຕ່າງລະຫວ່າງອັດຕາ ທທກ ກັບອັດຕາຕະຫຼາດ ຫຍັບອອກຈາກກັນທັງສອງສະກຸນເງິນ ຄື: ກີບທຽບໂດລາສະຫະລັດ ຈາກ 0,50% ມາເປັນ 0,54% ແລະ ກີບທຽບບາດ ຈາກ 0,24% ມາເປັນ 0,35%. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 0,96% ທຽບກັບເງິນໂດລາສະຫະລັດ ແຕ່ແຂງຄ່າ 9,62% ທຽບກັບເງິນບາດ;
- ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ຮອດວັນທີ 11/01/2016 ເຫັນວ່າມູນຄ່າຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 31,95% ຍ້ອນຄວາມຕ້ອງການ ແລະ ການສະໜອງເງິນຕາຕ່າງປະເທດ ຫຼຸດລົງ ຊຶ່ງເຫັນໄດ້ຈາກທະນາຄານທຸລະກິດ (ທທກ) ຂາຍສຸດທິ 73,08 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ ຊື້ໂດລາສຸດທິ 182,71 ລ້ານໂດລາສະຫະລັດ ແຕ່ຂາຍເງິນບາດສຸດທິ 9.272,16 ລ້ານບາດ ຫຼື 255,79 ລ້ານໂດລາສະຫະລັດທຽບເທົ່າ).

ທຫລ ຂາຍສຸດທິ 77,19 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ ຂາຍໂດລາສຸດທິ 78,66 ລ້ານໂດລາສະຫະລັດ ແຕ່ຊື້ເງິນບາດສຸດທິ 53,20 ລ້ານບາດ ຫຼື 1,47 ລ້ານໂດລາສະຫະລັດທຽບເທົ່າ);

- ດຸນການຊຳລະກັບຕ່າງປະເທດຜ່ານ ITRS ປະຈຳເດືອນ 01/2016 (13/12/2015-12/01/2016) ໄດ້ມີກະແສເງິນໄຫຼເຂົ້າຜ່ານລະບົບທະນາຄານ ສຸດທິ 373,33 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼເຂົ້າ 1.636,58 ລ້ານໂດລາສະຫະລັດ ຊຶ່ງມາຈາກການລົງທຶນໂດຍກົງຈາກຕ່າງປະເທດ 103,93 ລ້ານໂດລາສະຫະລັດ, ການລົງທຶນໃນຮຸ້ນ 179,46 ລ້ານໂດລາສະຫະລັດ ແລະ ເງິນກູ້ຢືມພາກລັດຖະບານ 30,23 ລ້ານໂດລາສະຫະລັດ, ຫົວໜ່ວຍທຸລະກິດ 237,15 ລ້ານໂດລາສະຫະລັດ ແລະ ທະນາຄານທຸລະກິດ 618,18 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼອອກ ມີຈຳນວນ 1.263,25 ລ້ານໂດລາສະຫະລັດ ຊຶ່ງມາຈາກການຖອນເງິນລົງທຶນໂດຍກົງຈາກຕ່າງປະເທດ 29,40 ລ້ານໂດລາສະຫະລັດ ແລະ ການຊຳລະເງິນກູ້ຢືມຈາກຕ່າງປະເທດຂອງທະນາຄານທຸລະກິດຈຳນວນ 728,60 ລ້ານໂດລາສະຫະລັດ.

## 3. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ການລະດົມເງິນຝາກຮອດວັນທີ 15/01/2016 (ຕົວເລກເບື້ອງຕົ້ນ) ຍອດເງິນຝາກທັງໝົດ 53.695,95 ຕື້ກີບ ເພີ່ມຂຶ້ນ 0,34% ເມື່ອທຽບໃສ່ເດືອນຜ່ານມາ. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 2,13% ກວມເອົາ 51,40% ຂອງເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 1,48% ຊຶ່ງກວມເອົາ 48,60% ຂອງເງິນຝາກທັງໝົດ;

ການປ່ອຍສິນເຊື່ອຮອດວັນທີ 15/01/2016 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 48.063,14 ຕື້ກີບ ຫຼຸດລົງ 0,50% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 49,88% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາກວມເອົາ 50,12% ຂອງສິນເຊື່ອທັງໝົດ;

ໃນເດືອນ 01/2016 ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດ 38,88 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 26,66% (ໃນເດືອນ 12/2015 ປ່ອຍສິນເຊື່ອ ຈຳນວນ 53,02 ຕື້ກີບ). ເກັບຕົ້ນທຶນໄດ້ 32,17 ຕື້ກີບ, ເກັບດອກເບ້ຍໄດ້ 12,62 ຕື້ກີບ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 01/2016 ມີຈຳນວນ 2.659,98 ຕື້ກີບ. ໃນນີ້, ສິນເຊື່ອຢູ່ເມືອງເປົ້າໝາຍ 1.729,41 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 227,06 ຕື້ກີບ, ບ້ານເຣັດທົດລອງ 3 ສ້າງ 262,14 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 441,37 ຕື້ກີບ. ໃນນີ້: ໜີ້ NPL ມີຈຳນວນ 677,95 ຕື້ກີບ ກວມເອົາ 25,49% ຂອງຍອດສິນເຊື່ອທັງໝົດ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 12/2015 ມີຈຳນວນ 2.130,49 ຕື້ກີບ ຫຼຸດລົງ 41,30% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 3,46% ຂອງຍອດເຫຼືອສິນເຊື່ອທັງໝົດ.

[1] ເດືອນ 01/2016 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງບໍ່ຄົບຖ້ວນ;

## 4. ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊໍາລະສະສາງ

ການຊໍາລະສະສາງດ້ວຍແຊັກຜ່ານສູນຊໍາລະສະສາງໃນເດືອນນີ້ມີຈໍານວນ 3.163 ສະບັບ ຫຼຸດລົງ 10,88% ເປັນເງິນຈໍານວນ 2.455,10 ຕື້ກີບ ເພີ່ມຂຶ້ນ 3,41% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈໍານວນ 69 ຄັ້ງ ມີມູນຄ່າການໂອນ 430,11 ຕື້ກີບ ຫຼຸດລົງ 53,46% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/12/2015-24/01/2016 ມີການເຄື່ອນໄຫວຈໍານວນ 7.931 ຄັ້ງ ລາຍລະອຽດມີ ດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 7.858 ຄັ້ງ ມີມູນຄ່າການໂອນ 2.052,03 ຕື້ກີບ ເພີ່ມຂຶ້ນ 1,17% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານ ພັດທະນາລາວ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 2.010 ຄັ້ງ ຈາກທະນາຄານທີ່ເຮັດທຸລະກໍາທັງໝົດ 35 ທະນາຄານ, 1 ຕະຫຼາດຫຼັກຊັບ ແລະ Bconnex;
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈໍານວນ 69 ຄັ້ງ ມີມູນຄ່າ 512,82 ຕື້ກີບ ຫຼຸດລົງ 27,22% ທຽບໃສ່ເດືອນຜ່ານມາ;
- **ສະກຸນເງິນໂດລາສະຫະລັດ:** ມີການເຄື່ອນໄຫວ 4 ຄັ້ງ ມີມູນຄ່າການໂອນ 1,5 ລ້ານໂດລາສະລະລັດ ຈາກທັງໝົດ 5 ທະນາຄານ.

### 4.2 ການຊື້-ຂາຍພັນທະບັດ

ພາຍໃນເດືອນ 01/2016 ພັນທະບັດກະຊວງການເງິນບ້ວງສະສົມທຶນ (ທະນາຄານແຫ່ງ ສປປ ລາວ ບໍ່ຄໍ້າປະກັນ) ມີການຈໍາໜ່າຍ ຈໍານວນ 307 ຕື້ກີບ. ມີການໄຖ່ຖອນພັນທະບັດບ້ວງດຸນດ່ຽງງົບປະມານ ໃຫ້ທະນາຄານແຫ່ງ ສປປ ລາວ 135 ຕື້ກີບ. ປັດຈຸບັນພັນທະບັດກະຊວງການເງິນ ມີທັງໝົດ 3 ບ້ວງ ຊຶ່ງມີຍອດເຫຼືອ 5.977,80 ຕື້ກີບ ແລະ 90 ລ້ານໂດລາສະຫະລັດ (ບ້ວງລະດົມທຶນຈາກທະນາຄານທຸລະກິດ ໂດຍກົງ ຈໍານວນ 530 ຕື້ກີບ ແລະ 90 ລ້ານໂດລາ, ບ້ວງລ້າງໜີ້ 3.622,80 ຕື້ກີບ, ບ້ວງລະດົມທຶນຈາກທະນາຄານທຸລະກິດ ປະມູນຜ່ານທະນາຄານແຫ່ງ ສປປ ລາວ ຈໍານວນ 1.825 ຕື້ກີບ).

ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 01/2016 ບໍ່ມີການເຄື່ອນໄຫວ. ປັດຈຸບັນຍັງມີຍອດເຫຼືອພັນທະບັດທີ່ຍັງບໍ່ທັນມີການໄຖ່ຖອນ ຈໍານວນ 254 ລ້ານໂດລາສະຫະລັດ. ພາຍໃນເດືອນນີ້ ມີການຈ່າຍດອກເບ້ຍໃຫ້ທະນາຄານທຸລະກິດ ຈໍານວນ 1,48 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.181,68 ຈຸດ ເພີ່ມຂຶ້ນ 0,67% ເມື່ອທຽບໃສ່ເດືອນຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 634.797 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,15 ຕື້ກີບ ຫຼຸດລົງ 53,61% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 49,15% ຂອງມູນຄ່າການຊື້-ຂາຍທັງໝົດ.

- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.015 ກີບ/ຮຸ້ນ ຫຼຸດລົງ 127 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 157.030 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 787,44 ລ້ານກີບ ຫຼຸດລົງ 23,54% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 36,45% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,71%[2].

- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.803 ກີບ/ຮຸ້ນ ຫຼຸດລົງ 355 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 318.606 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,84 ຕື້ກີບ ຫຼຸດລົງ 56,15% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 36,25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

- ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.241 ກີບ/ຮຸ້ນ ຫຼຸດລົງ 359 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 256 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 1,85 ລ້ານກີບ ເພີ່ມຂຶ້ນ 90,56% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 50% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.843 ກີບ/ຮຸ້ນ ເພີ່ມຂຶ້ນ 128 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 29.849 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 84,86 ລ້ານກີບ ຫຼຸດລົງ 84,53% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 16,29% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[5].

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.360 ກີບ/ຮຸ້ນ ເພີ່ມຂຶ້ນ 100 ກີບ/ຮຸ້ນ ມີປະລິມານການຊື້-ຂາຍທັງໝົດ 129.056 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 433,69 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ສະເລ່ຍກວມເອົາ 23,05% ຂອງມູນຄ່າການຊື້-ຂາຍຮຸ້ນ SVN ທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 4,17%[6].

---

[2] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[4] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[6] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

<u>ພາກທີ II</u>

<u>ທິດທາງແຜນການໃນຕໍ່ໜ້າ</u>

## I. <u>ວຽກງານການເມືອງແນວຄິດ</u>

ສືບຕໍ່ນໍາພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. <u>ວຽກງານວິຊາສະເພາະ</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກໍານົດໄວ້ໃນແຜນງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈໍາລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສໍາຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ;
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນໍາໃຊ້ເງິນກີບ ແລະ ການຊໍາລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງ ສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນໍາໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນໍາໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;
- ສືບຕໍ່ປະສານສົມທົບກັບກະຊວງການເງິນ ເພື່ອຄວາມເປັນເອກະພາບໃນການກະກຽມ ເປັນເຈົ້າພາບກອງປະຊຸມອາຊຽນຂະແໜງການເງິນ-ທະນາຄານ ປີ 2016;
- ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດເງື່ອນໄຂເພີ່ມເຕີມຂອງທະນາຄານ ມາເລຍັນ ເບີຫັດ ສາຂາໜອງດ້ວງ ເພື່ອກະກຽມອອກໃບອະນຸຍາດສ້າງຕັ້ງຖາວອນ, ທະນາຄານເອຊີລີດາ ລາວຈໍາກັດ ກ່ຽວກັບການສະເໜີຂໍອະນຸຍາດຍົກໜ່ວຍ

ບໍລິການຫຼວງພະບາງ ມາເປັນສາຂາ ແລະ ທະນາຄານລາວຈີນ ຈຳກັດ ກ່ຽວກັບການສະເໜີຂໍອະນຸຍາດສ້າງຕັ້ງສາຂາບໍ່ເຕັນ, ແຂວງຫຼວງນ້ຳທາ;

- ສືບຕໍ່ຜ່ານຂໍ້ຕົກລົງວ່າດ້ວຍການບໍລິຫານຊັບສິນຂອງທະນາຄານ ແລະ ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍ ການໃຫ້ບໍລິການຜະລິດຕະພັນຂອງທະນາຄານ;
- ສືບຕໍ່ປັບປຸງຮ່າງລະບຽບວ່າດ້ວຍການຊື້ຮຸ້ນທີ່ບໍ່ມີເງິນມັດຈຳລ່ວງໜ້າ, ຮ່າງລະບຽບວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍການໄດ້ມາ ແລະ ຈຳໜ່າຍຊັບສິນຂອງບໍລິສັດຈົດທະບຽນ ແລະ ຮ່າງລະບຽບວ່າດ້ວຍຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ;
- ຕິດຕາມການກະກຽມຫັນບໍລິສັດ ຊີມັງລາວ ເປັນບໍລິສັດມະຫາຊົນ ເພື່ອອອກຮຸ້ນຄັ້ງທຳອິດ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ;
- ສືບຕໍ່ສັງລວມ ແລະ ກວດກາ ການຮັກສາລະດັບຖານະເງິນຕາຕ່າງປະເທດຂອງບັນດາທະນາຄານທຸລະກິດ;
- ຄົ້ນຄວ້າລົງເລິກເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ແລະ ສືບຕໍ່ເຮັດວຽກກັບບໍລິສັດ ເອີນແອນຢັງ ລາວ ຈຳກັດ ໃນການສ້າງແຜນຈັດຕັ້ງປະຕິບັດ ຫຼັກການບາເຊວ 2;
- ຕິດຕາມດຳລັດວ່າດ້ວຍໂຮງຊວດຈຳ ທີ່ສະເໜີເຂົ້າຜ່ານກອງປະຊຸມລັດຖະບານ;
- ກະກຽມວຽກງານປິດບັນຊີ ແລະ ສ້າງເອກະສານລາຍງານການເງິນ ຂອງທະນາຄານແຫ່ງ ສປປ ລາວ ທົ່ວລະບົບຄົບຊຸດ ປະຈຳປີ 2015 ໃຫ້ສຳເລັດຕາມລະບຽບກຳນົດ;
- ສືບຕໍ່ສັງລວມ-ສະຫຼຸບປະກົດການຫຍໍ້ທໍ້ ແລະ ການສໍ້ລາດບັງຫຼວງ;
- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ສືບຕໍ່ສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2015 ແລະ ແຜນການປີ 2016 ແລະ ສະຫຼຸບການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ ປະຈຳປີ 2015 ແລະ ແຜນການປີ 2016;
- ສືບຕໍ່ລາຍງານທຸລະກຳທີ່ມີລັກສະນະພາໃຫ້ສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ເພື່ອວິເຄາະ ແລະ ລາຍງານຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ;
- ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມລະດັບວິຊາການ ວຽກງານອາຊຽນ ແລະ ອາຊຽນ+3;
- ສືບຕໍ່ວຽກງານປ້ອງກັນເວນຍາມອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ ເພື່ອກະກຽມຕ້ອນຮັບກອງປະຊຸມໃຫຍ່ຂອງພັກປະຊາຊົນປະຕິວັດລາວ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ດຣ. ສົມພາວ ໄຟສິດ**